275
4/8/14

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1350 / ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 01 ສິງຫາ 2014

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ວິສາຫະກິດ ທີ່ເຮັດທຸລະກິດໃຫ້ຄຳປຶກສາດ້ານຕ່າງໆ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດຢູ່ຂັ້ນແຂວງໃນໄລຍະຜ່ານມາ

ເລື່ອງ: ໃຫ້ວິສາຫະກິດທີ່ປຶກສາດ້ານຕ່າງໆ ມາຂຶ້ນທະບຽນວິສາຫະກິດຄືນໃໝ່

ເພື່ອຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈ ຂອງແຈ້ງການ, ສະບັບເລກທີ 1199/ອຄ.ທຄວ, ລົງວັນທີ 04 ກໍລະກົດ 2014 (ກ່ຽວກັບການຂຶ້ນທະບຽນວິສາຫະກິດໃນທຸລະກິດທີ່ປຶກສາດ້ານຕ່າງໆ) ໃຫ້ປາກົດຜົນເປັນຈິງ ແນໃສ່ ແກ້ໄຂ ແລະ ສະກັດກັ້ນ ຜົນເສັຍຫາຍທີ່ເກີດຈາກການສວຍໃຊ້ຊື່ປະເພດທຸລະກິດທີ່ປຶກສາ ເພື່ອດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບ ລະບຽບ ກົດໝາຍ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ວິສາຫະກິດທີ່ເຄື່ອນໄຫວທຸລະກິດໃນປະເພດທຸລະກິດບໍລິການໃຫ້ຄຳປຶກສາ ແມ່ນວິສາຫະກິດທີ່ເຄື່ອນໄຫວທຸລະກິດ ໂດຍການໃຫ້ຄຳແນະນຳ ຊີ້ຊ່ອງທາງຄວາມຮູ້ ທີ່ເປັນປະໂຫຍດແກ່ການເຄື່ອນໄຫວທຸລະກິດ ຂອງຜູ້ດຳເນີນທຸລະກິດ ຫລື ປະໂຫຍດອື່ນໆ ແກ່ຜູ້ໃຊ້ບໍລິການຕ່າງໆເທົ່ານັ້ນ ແຕ່ບໍ່ມີສິດເຄື່ອນໄຫວທຸລະກິດທີ່ຕົນໃຫ້ຄຳປຶກສາ ດ້ວຍຕົນເອງ;

2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ແຈ້ງໃຫ້ວິສາຫະກິດທີ່ປຶກສາ ແລະ ວິສາຫະກິດອື່ນ ທີ່ບໍ່ແມ່ນວິສາຫະກິດທີ່ປຶກສາ ແຕ່ ມີປະເພດທຸລະກິດທີ່ປຶກສາ ໃນໃບທະບຽນວິສາຫະກິດ ທີ່ຕົນໄດ້ອອກທະບຽນວິສາຫະກິດ ໃຫ້ໃນໄລຍະຜ່ານມາ ຮີບຮ້ອນປະສານນຳກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອປັບປຸງເນື້ອໃນທະບຽນ ຫລື ຂຶ້ນທະບຽນວິສາຫະກິດຄືນໃໝ່ ຊ້າສຸດບໍ່ໃຫ້ເກີນວັນທີ 31 ສິງຫາ 2014;

3. ໃນການປະກອບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນປະເພດທຸລະກິດທີ່ປຶກສາ (ນອກຈາກຟອມເອກະສານຄຳຮ້ອງ ທົ່ວໄປແລ້ວ) ຍັງຕ້ອງໄດ້ປະກອບເອກສານ ຄຳປະຕິຍານ ຕາມແບບຟອມ ຄັດຕິດມາພ້ອມນີ້ ;

4. ໃນໄລຍະເວລາ ລໍຖ້າການປັບປຸງເນື້ອໃນທະບຽນ ແລະ ຂຶ້ນທະບຽນວິສາຫະກິດຄືນໃໝ່ນີ້, ຫາກວິສາຫະກິດໃດ ມີການເຄື່ອນໄຫວທຸລະກິດນອກຂອບເຂດວັດຖຸປະສົງ ຈະຕ້ອງຮັບຜິດຊອບຕໍ່ຜົນທີ່ເກີດຈາກການກະທຳຂອງຕົນ ທັງທາງແພ່ງ ແລະ ທາງອາຍາ ແລະ ຈະຖືກສັ່ງຍຸບເລີກວິສາຫະກິດຕາມຂັ້ນຕອນຂອງກົດໝາຍ ທັນທີ;

5. ວິສາຫະກິດ ທີ່ບໍ່ມາປັບປຸງເນື້ອໃນທະບຽນ ຫລື ຂຶ້ນທະບຽນວິສາຫະກິດຄືນໃໝ່ ພາຍໃນກຳນົດເວລາດັ່ງກ່າວມາເທິງນີ້ ໂດຍບໍ່ມີເຫດຜົນ ຈະເຮັດໃຫ້ໃບທະບຽນວິສາຫະກິດ ຂອງວິສາຫະກິດນັ້ນ ເປັນໂມຄະ ແລະ ຈະຖືກສັ່ງໂຈະການເຄື່ອນໄຫວທຸລະກິດ. ບຸກຄົນ ຫລື ນິຕິບຸກຄົນໃດ ຫາກຍັງນຳໃຊ້ໃບທະບຽນວິສາຫະກິດດັ່ງກ່າວ ຖືວ່າເປັນການເຄື່ອນໄຫວທຸລະກິດ ໂດຍບໍ່ມີທະບຽນວິສາຫະກິດ;

6. ໃນການພິຈາລະນາ ຂຶ້ນທະບຽນວິສາຫະກິດ ໃນປະເພດທຸລະກິດທີ່ປຶກສານັ້ນ ຫາກປະເພດທຸລະກິດທີ່ປຶກສາໃດ ນອນໃນ ISIC Code, ໃນນີ້ ລວມທັງປະເພດທຸລະກິດທີ່ປຶກສາ ທີ່ມີຂໍ້ສົງໄສ ວ່າ ຄຸມເຄືອ ກັບ ISIC Code (ຕາມທີ່ທາງສຳນັກງານຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ ໄດ້ແຈ້ງໃຫ້) ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ (ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ) ເຮັດສະໂນດນຳສົ່ງ ໃຫ້ສຳນັກງານດັ່ງກ່າວ ເພື່ອພິຈາລະນາອະນຸຍາດ ກ່ອນຂຶ້ນທະບຽນວິສາະຫະກິດໃຫ້;

7. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຮີບຮ້ອນຈັດຕັ້ງປະຕິບັດ ຕາມເນື້ອໃນ ຈິດໃຈ ຂອງແຈ້ງການ, ສະບັບເລກທີ 1199/ອຄ.ທຄວ, ລົງວັນທີ 04 ກໍລະກົດ 2014 (ກ່ຽວກັບການຂຶ້ນທະບຽນວິສາຫະກິດ ໃນທຸລະກິດທີ່ປຶກສາດ້ານຕ່າງໆ) ແລະ ຕິດຕາມການເຄື່ອນໄຫວ ຂອງບັນດາວິສາຫະກິດທີ່ປຶກສາ ຫລື ວິສາຫະກິດທີ່ມີປະເພດທຸລະກິດໃຫ້ບໍລິການຄຳປຶກສາໃນໃບທະບຽນວິສາຫະກິດ, ກໍລະນີມີການລະເມີດໃຫ້ປະຕິບັດມາດຕະການ ຕາມກົດໝາຍຢ່າງເຂັ້ມງວດ ແລະ ໃຫ້ລາຍງານກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຊາບ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ສຽວສະຫວາດ ສະແຫວງສຶກສາ